

# "ການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ"

ນິຍາມ

## "ການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ"

"ການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ" ໝາຍເຖິງຂະບວນການທີ່ບຸກຄົນໃດໜຶ່ງຈົງໃຈສົ່ງຂໍ້ຄວາມທີ່ສະແດງອອກທາງເພດຢ່າງຈະແຈ້ງ ຫຼື ສົ່ງຮູບພາບໂປ້ເປືອຍຂອງພວກເຂົາ.

ຮູບພາບ ຫຼື ວິດີໂອເຫຼົ່ານີ້ອາດຈະປະກອບດ້ວຍພາບໂປ້ເປືອຍຂອງຮ່າງກາຍສ່ວນໃດໜຶ່ງ ຫຼື ໝົດຮ່າງກາຍ, ກິດຈະກຳທີ່ກະຕຸ້ນຄວາມຕ້ອງການທາງເພດ ແລະ ສ່ວນໃຫຍ່ແມ່ນຈະສົ່ງຮູບພາບ ຫຼື ວິດີໂອເຫຼົ່ານີ້ໃຫ້ກັບເພື່ອນຊາຍ ຫຼື ເພື່ອນຍິງຄົນສະໜິດ ຫຼື ໝເພື່ອນຄົນອື່ນທີ່ຢູ່ໃນໄວດຽວກັນ.



## ຂອບກົດໝາຍ

ລະບຽບກົດໝາຍພາກພື້ນ ຫຼື ສາກົນກ່ຽວກັບການຂູດຮີດທາງເພດເດັກບໍ່ໄດ້ກຳນົດຢ່າງຈະແຈ້ງວ່າການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດເປັນການກະທຳຜິດທາງອາຍາ.

ເຖິງຢ່າງໃດກໍ່ຕາມ, ໂດຍທົ່ວໄປແລ້ວ"ການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ"ເປັນການລະເມີດກົດໝາຍ ວ່າດ້ວຍການຕ້ານສິ່ງລາມົກອະນາຈານເດັກ ເນື່ອງຈາກວ່າການກະທຳດັ່ງກ່າວພົວພັນກັບການຜະລິດ ແລະ ການແຈກຢາຍຮູບໂປ້ເປືອຍຂອງເດັກ.

ອີງຕາມອະນຸສັນຍາເພີ້ມເຕີມຂອງສົນທິສັນຍາວ່າດ້ວຍສິດທິເດັກ ກ່ຽວກັບ ການຄ້າເດັກ, ການຄ້າປະເວນີເດັກ ແລະ ສິ່ງລາມົກອານາຈານທີ່ກ່ຽວກັບເດັກ, ຄຳວ່າສິ່ງລາມົກອະນາຈານເດັກໝາຍເຖິງ "ທຸກສິ່ງຢ່າງທີ່ ມີເດັກເຂົ້າໄປມີສ່ວນຮ່ວມ ໃນກິດຈະກຳທາງເພດຢ່າງແທ້ຈິງ ຫຼື ຮຽນແບບ ຫຼື ໝາຍເຖິງສິ່ງທີ່ສະແດງໃຫ້ເຫັນສ່ວນສະຫງວນຂອງຮ່າງກາຍເດັກເພື່ອຈຸດປະສົງທາງເພດ". ນິຍາມດັ່ງກ່າວນີ້ຈະກວມເຖິງການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ.

ດັ່ງນັ້ນ, ບຸກຄົນທີ່ບັນທຶກ ແລະ/ຫຼື ສົ່ງອອກຂໍ້ຄວາມທີ່ມີລັກສະນະທາງເພດ ຈະຖືກປະຕິບັດມາດຕະການລົງໂທດໃນສະຖານແຈກຢາຍສິ່ງລາມົກອະນາຈານເດັກ. ນອກຈາກນັ້ນ, ບຸກຄົນທີ່ໄດ້ຮັບຂໍ້ຄວາມດັ່ງກ່າວຈະຖືກປະຕິບັດມາດຕະການລົງໂທດສຳລັບການຄອບຄອງ ຫຼື ເຂົ້າເຖິງສິ່ງລາມົກອະນາຈານເດັກ.

ເຖິງແມ່ນວ່າໄອຍະການ ແລະ ເຈົ້າໜ້າທີ່ຜູ້ບັງຄັບໃຊ້ກົດໝາຍສ່ວນໃຫຍ່ຈະບໍ່ປະຕິບັດມາດຕະການລົງໂທດຕໍ່ເດັກທີ່ມີສ່ວນຮ່ວມໃນ "ການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ" ກໍ່ຕາມ, ແຕ່ໃນບາງຂອບກົດໝາຍ ຕາມຄວາມເປັນຈິງແລ້ວເດັກຈະຖືກປະຕິບັດມາດຕະການລົງໂທດໃນສະຖານກະທຳອະນາຈານເດັກ.

*ຫຼັງຈາກເນື້ອໃນໄດ້ຖືກສົ່ງຕໍ່ໃນອິນເຕີເນັດ, ສ່ວນໃຫຍ່ແມ່ນບໍ່ອາດສາມາດທີ່ຈະຄວບຄຸມການແຈກຢາຍເນື້ອໃນດັ່ງກ່າວ.*



## ຍ້ອນຫຍັງເດັກຈຶ່ງມີສ່ວນຮ່ວມໃນ "ການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ" ແລະ ດ້ວຍວິທີການໃດ?

- ໂດຍທົ່ວໄປ ເດັກເປັນຜູ້ບັນທຶກ ແລະ ສົ່ງຮູບພາບ**ດ້ວຍຕົວເອງ** ຫຼື **ຕາມການຮ້ອງຂໍ**ຂອງບຸກຄົນອື່ນ;
- ເຊິ່ງສາມາດບັນທຶກຮູບພາບ/ວິດີໂອໄດ້ດ້ວຍອຸປະກອນຕ່າງໆ. ສ່ວນຫຼາຍແລ້ວແມ່ນ**ນຳໃຊ້ໂທລະສັບມືຖື**ໃນການສ້າງເນື້ອໃນ ທີ່ຈະສົ່ງເປັນຂໍ້ຄວາມ, ສົ່ງເຂົ້າໃນຫ້ອງສົນທະນາ ຫຼື ສື່ສັງຄົມອອນລາຍ;
- **ເນື້ອໃນດັ່ງກ່າວຈະຖືກສົ່ງຫາ**ເພື່ອນຊາຍ ຫຼື ເພື່ອນຍິງຄົນສະໜິດ ຫຼື ໝູ່ເພື່ອນຄົນອື່ນທີ່ຢູ່ໃນໄວດຽວກັນທີ່ພວກເຂົາຕິດຕໍ່ສື່ສານນຳ ທາງອິນເຕີເນັດ;
- ແຮງຈູງໃຈ**ຂອງເດັກຕໍ່ "ການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ"** ອາດມີລັກສະນະຫຼາກຫຼາຍ, ເຊິ່ງປະກອບດ້ວຍຄວາມເພິ່ງພໍໃຈໃນຄວາມສຳພັນທາງເພດ, ການທົດສອບ, ຄຳຍ້ອງຍໍຊັກຊວນ ຫຼື ຄວາມຕັ້ງໃຈ ແລະ ເພື່ອຢືນຢັນຄຳໝັ້ນສັນຍາຕໍ່ບຸກຄົນໃດໜຶ່ງ. ແຮງຈູງໃຈຂອງເຂົາເຈົ້າອາດຈະເກີດຈາກການກົດດັນຂອງໝູ່ເພື່ອນທີ່ຢູ່ໃນໄວດຽວກັນເຊັ່ນດຽວກັນ;
- "ການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ" ແມ່ນບັນຫາ ເນື່ອງຈາກເດັກສ່ວນໃຫຍ່ບໍ່ເຂົ້າໃຈເຖິງ**ຜົນກະທົບທີ່ອາດຈະເກີດຂຶ້ນຕາມມາ**ຈາກການກະທຳຂອງເຂົາເຈົ້າ ແລະ ເຂົາເຈົ້າບໍ່ນຳໃຊ້ມາດຕະການຕ່າງໆໃນການ**ປົກປິດຂໍ້ມູນທີ່ລະບຸຕົວຕົນຂອງພວກເຂົາ;**
- "ການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ" ຈະເປັນບັນຫາໃຫຍ່ຂຶ້ນຖ້າຫາກເນື້ອໃນທີ່ສ້າງຂຶ້ນນັ້ນກ່ຽວພັນເຖິງ**ບັນຫາອາດຊະຍາກຳ ຫຼື ການທາລຸນ** ເຊັ່ນ: ການມີຜູ້ໃຫຍ່ເຂົ້າມາພົວພັນ;
- "ການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ" ເຮັດໃຫ້ເດັກ**ຕົກໃນພາວະສ່ຽງ**ທີ່ຈະກາຍເປັນຜູ້ຖືກເຄາະຮ້າຍຂອງ **ການຂູດຮີດທາງເພດ ແລະ ການກໍ່ກວນໃນອິນເຕີເນັດ,** ແລະ ບາງຄັ້ງຮູບພາບຂອງເຂົາເຈົ້າກໍ່ຖືກສຳເນົາ ຫຼື ນຳໃຊ້ໃນຄັງເກັບສິ່ງທີ່ສື່ເຖິງການທາລຸນທາງເພດເດັກ.

* *ກະລຸນາເບິ່ງເອກະສານຂໍ້ມູນຕົວຈິງ - ການຂູດຮີດທາງເພດ*

## ທ່ານສາມາດເຮັດຫຍັງໄດ້ແນ່?

ຈົ່ງສຶກສາອົບຮົມ ແລະ ປູກຈິດສຳນຶກໃຫ້ແກ່ເດັກ, ພໍ່ແມ່ ແລະ ຜູ້ດູແລເດັກກ່ຽວກັບຄວາມສ່ຽງ ແລະ ຜົນກະທົບທີ່ຈະເກີດຂຶ້ນຈາກ "ການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ";

ຈົ່ງລາຍງານເມື່ອພົບເຫັນ "ຂໍ້ຄວາມທີ່ມີລັກສະນະທາງເພດ" ຫຼື ສິ່ງທີ່ສື່ເຖິງການທາລຸນທາງເພດເດັກໃນອິນເຕີເນັດ.

ຈົ່ງສົ່ງເສີມ ແລະ ຮ່ວມມືກັບຜູ້ໃຫ້ບໍລິການອິນເຕີເນັດເພື່ອຈຳກັດການຈະລາຈອນຂອງ "ການສົ່ງຂໍ້ຄວາມທີ່ມີລັກສະນະທາງເພດ" ຫຼື ເນື້ອໃນທີ່ສື່ເຖິງການທາລຸນທາງເພດເດັກໃນອິນເຕີເນັດ ແລະ ສົ່ງເສີມຜູ້ດຳເນີນທຸລະກິດໂທລະສັບມືຖື ໃນການຈັດຕັ້ງປະຕິບັດບັນດາມາດຕະການທີ່ເໝາະສົມເພື່ອປະສານສົມທົບກັບເຈົ້າໜ້າທີ່ຕ່າງໆເມື່ອຈຳເປັນ (ເປັນຕົ້ນແມ່ນການແບ່ງປັນຂໍ້ມູນຜູ້ໃຊ້ຕາມການສະເໜີ).

ເອກະສານຂໍ້ມູນຕົວຈິງທີ່ຊີ້ໃຫ້ເຫັນກ່ຽວກັບການຂູດຮີດທາງເພດເດັກທາງອິນເຕີເນັດ ສະບັບນີ້ໄດ້ຮັບການພັດທະນາໂດຍອົງການ ECPAT ສາກົນ.
ສະໜັບສະໜູນການແປພາສາ ແລະ ການຜະລິດໂດຍອົງການສປຊ ສຳລັບເດັກ

unicef unite for children